# ກົດບັດ ຂອງຊຸມຊົນ ໂຮງຮຽນ

**Collaborative.** **Respectful.** **Communication.**
**ຮ່ວມມືກັນ.** **ສະແດງຄວາມເຄົາຣົບ.** **ການສື່ສານ.**

ກົດບັດຂອງຊຸມຊົນໂຮງຮຽນທີ່ຢູ່ຕໍ່ລົງໄປນີ້ ອະທິບາຍເຖິງຄວາມຮັບຜິດຊອບຕ່າງໆຂອງ ບັນດາພໍ່ແມ່, ຜູ້ດູແລ, ຜູ້ໃຫ້ຄວາມຮູ້ ແລະ ພະນັກງານຂອງໂຮງຮຽນຫຼວງ ຂອງຣັດ NSW ເພື່ອໃຫ້ແນ່ໃຈວ່າສະພາບແວດລ້ອມການຮຽນຂອງພວກເຮົາເປັນບ່ອນທີ່ຮ່ວມມືກັນ, ຊ່ວຍເຫຼືອອູ້ຊູກັນ ແລະ ເປັນອັນນຶ່ງອັນດຽວກັນ.

## ໂຮງຮຽນຂອງພວກເຮົາມີຫຍັງໃຫ້ແດ່

ໂຮງຮຽນຫຼວງຂອງ ຣັດ NSW ເຮັດວຽກເພື່ອສ້າງສະພາບແວດລ້ອມທີ່ດີສໍາລັບບັນດານັກຮຽນ, ພະນັກງານ ແລະ ຊຸມຊົນໂຮງຮຽນທັງໝົດທີ່ໃຫ້ຄວາມອູ້ມຊູການຮຽນຂອງນັກຮຽນ. ພວກເຮົາພະຍາຍາມຕໍ່ສູ້ເພື່ອໃຫ້ ແນ່ໃຈວ່ານັກຮຽນທຸກໆຄົນເປັນທີ່ຮູ້ຈັກ, ຖືກຮັບຮູ້ໃນຄຸນຄ່າ ແລະ ໄດ້ຮັບການດູແລ.

ການສຶກສາທີ່ດີທີ່ສຸດເກີດຂຶ້ນໄດ້ກໍຕໍ່ເມື່ອພໍ່ແມ່ ແລະ ໂຮງຮຽນເຮັດວຽກຮ່ວມກັນ.

ກົດບັດຂອງຊຸມຊົນໂຮງຮຽນສອດຄ່ອງກັບແຜນຍຸທສາດສໍາລັບປີ 2018—2022 ຂອງ NSW Department of Education.

## ສະພາບແວດລ້ອມທີ່ດີ

ມັນເປັນສິ່ງສໍາຄັນທີ່ໂຮງຮຽນຫຼວງຂອງ ຣັດ NSW ມີສະພາບແວດລ້ອມທີ່ດີ ແລະ ພໍ່ແມ່ ແລະຜູ້ດູແລໄດ້ຖືກແຈ້ງໃຫ້ຊາບເຖິງຄວາມກ້າວໜ້າຂອງນັກຮຽນ ແລະ ການປະກາດ ຕ່າງໆຂອງທາງໂຮງຮຽນ.

ບັນດາພໍ່ແມ່ ແລະ ຜູ້ດູແລສາມາດຄາດຫວັງດັ່ງນີ້:

- ເປັນທີ່ຍິນດີຕ້ອນຮັບເຂົ້າສູ່ໂຮງຮຽນຂອງພວກເຮົາເພື່ອເຮັດວຽກຮ່ວມກັນເພື່ອສົ່ງເສີມການຮຽນຂອງນັກຮຽນ.
- ການສື່ສານຈາກພະນັກງານຂອງໂຮງຮຽນຈະຕົງຕໍ່ເວລາ, ສຸພາບແລະ ໃຫ້ຄວາມຮູ້.
- ຄວາມສໍາພັນທາງວິຊາການກັບພະນັກງານໂຮງຮຽນແມ່ນຢູ່ບົນພື້ນຖານຂອງຄວາມໂປ່ງໃສ, ຄວາມຊື່ສັດ ແລະ ຄວາມເຄົາຣົບຊຶ່ງກັນແລະກັນ.
- ໄດ້ຮັບການປະຕິບັດດ້ວຍຄວາມຍຸຕິທັມ. ຄວາມອົດກັ້ນ ແລະຄວາມເຂົ້າໃຈເປັນສິ່ງທີ່ຖືກສົ່ງເສີມ ເພາະວ່າພວກເຮົາເຄົາຣົບຄວາມແຕກຕ່າງອັນຫຼາກຫຼາຍ.

ພວກເຮົາປະຕິບັດຕໍ່ກັນດ້ວຍຄວາມເຄົາຣົບ

ພວກເຮົາຖືປຸຣິມະສິດໃນຄວາມຢູ່ດີຂອງນັກຮຽນແລະພະນັກງານໝົດທຸກຄົນ

**ຄວາມປະພຶດທີ່ບໍ່ປອດໃພ** ເປັນສິ່ງທີ່ຮັບບໍ່ໄດ້ຢູ່ໃນໂຮງຮຽນຂອງພວກເຮົາ

ພວກເຮົາເຮັດວຽກຮ່ວມກັນກັບໂຮງຮຽນ



**ຮັບປະກັນວ່າມີສະພາບແວດລ້ອມການຮຽນທີ່ມີຄວາມເຄົາຣົບຕໍ່ສະມາຊິກທຸກໆຄົນຂອງຊຸມຊົນໂຮງຮຽນຫຼວງຂອງຣັດ NSW.**

© NSW Department of Education 



ພວກເຮົາສ້າງ
ສະພາບແວດລ້ອມ
ການຮຽນທີ່
ມີຄວາມຮ່ວມມືກັນ

ພວກເຮົາທັງ
ໝົດຕ່າງ
ກໍມີສ່ວນຮ່ວມ

ພວກເຮົາເຮັດວຽກຮ່ວ
ມກັນເພື່ອສົ່ງເສີມການ
ຮຽນຂອງນັກຮຽນ

## ການສື່ສານກັບໂຮງຮຽນພວກເຮົາ

ພະນັກງານຂອງພວກເຮົາຈະຫາເວລາເພື່ອ ສົນທະນາກັບທ່ານເພື່ອພວກເຂົາຈະສາມາດ
ໃຫ້ຄວາມສົນໃຈກັບທ່ານຢ່າງເຕັມທີ່. ກະຣຸນາຈື່ໄວ້ວ່າໃນເວລາທີ່ພະນັກງານຂອງພວກ ເຮົາຢູ່ໃນຫ້ອງຮຽນຫຼືພວມຈັດການກັບວຽກອື່ນຢູ່, ພວກເຂົາອາດຈະບໍ່ສາມາດມີເວລາ ຕອບຄຳຖາມຂອງທ່ານໄດ້ໃນທັນທີ.



ໂຮງຮຽນຂອງພວກເຮົາຈະຮັບປະກັນວ່າ ການສື່ສານທາງລາຍລັກອັກສອນມີຄວາມ ເໝາະສົມ, ຍຸຕິທັມ ແລະອ່ານງ່າຍ. ພວກ ເຮົາຂໍຊຸກຍູ້ທ່ານໃຫ້ໃຊ້ອີເມລ໌ ແລະ ການສື່ ສານທາງໂຊຊຽລມີເດັຍທີ່ມີຄວາມເໝາະສົມໃນການຕິດຕໍ່ກັບໂຮງຮຽນຂອງທ່ານ ແລະ ໃຫ້ ຮູ້ທັນກັບເຫດການຕ່າງໆຂອງທາງຊຸມຊົນໂຮງຮຽນທີ່ຈະມີຂຶ້ນ.

ຄຳແນະນຳຂອງພວກເຮົາສຳລັບບັນດາພໍ່ແມ່, ຜູ້ດູແລ ແລະ ນັກຮຽນ ຈະໃຫ້ຂໍ້ມູນທີ່ມີ ປໂຍດ ກ່ຽວກັບວິທີການຮ້ອງຮຽນ:
https://education.nsw.gov.au/about-us/rights-and-accountability/complaints-compliments-and-suggestions/guide-for-parents-carers-and-students



## ການສື່ສານທີ່ມີຄວາມເຄົາຣົບເປັນສິດຢ່າງນຶ່ງ

ໃນບ່ອນເຮັດວຽກທຸກໆແຫ່ງໝົດທຸກຄົນມີສິດ ທີ່ຈະຮູ້ສຶກວ່າຕົນຖືກເຄົາຣົບ. ຄວາມປະພຶດອັນເປັນທີ່ຮັບບໍ່ໄດ້ແລະເປັນໜ້າລັງກຽດຈະບໍ່ມີບ່ອນຢືນຢູ່ໃນຊຸມຊົນໂຮງຮຽນຂອງພວກເຮົາ.

ເພື່ອໃຫ້ແນ່ໃຈໃນຄວາມຢູ່ດີຂອງນັກຮຽນ, ພະນັກງານ ແລະ ຊຸມຊົນໃນໂຮງຮຽນຂອງພວກເຮົາ,ບາດກ້າວຕ່າງໆຈະຖືກນຳໃຊ້ເພື່ອ ຈັດການກັບຄວາມປະພຶດອັນເປັນທີ່ຮັບບໍ່ໄດ້. ອັນນີ້ອາດຈະຮວມເຖິງການຈຳກັດການຕິດຕໍ່ກັບຊຸມຊົນໂຮງຮຽນຫຼື, ໃນກໍຣະນີທີ່ຮ້າຍແຮງກວ່າ, ຈະມີການສົ່ງໄປຫາຕຳຣວດ NSW.



### ຄວາມປະພຶດອັນເປັນທີ່ຮັບບໍ່ໄດ້ອາດຈະຮວມ ເຖິງ ແຕ່ບໍ່ຈຳກັດແຕ່ພຽງສິ່ງເຫຼົ່ານີ້:

- ທ່າທີທີ່ຮ້າຍກາດແລະຂູ່ເຂັນ, ເຊັ່ນຄວາມ ຮຸນແຮງ, ທ່າທາງຂູ່ເຂັນຫຼືຄວາມເຂົ້າໃກ້ ທາງຮ່າງກາຍ.
- ພາສາທີ່ຮ້າຍກາດແລະຂູ່ເຂັນ, ຮວມເຖິງ ການນຳໃຊ້ສິ່ງຫຍາບຄາຍລາມົກ,ໃຊ້ຄວາມ ເວົ້າທີ່ສໍ່ທາງເພດ, ດູຖູກເຊື້ອຊາດ ຫຼື ທີ່ມຸ່ງໝາຍທຳລາຍ ຫຼື ໃຊ້ສຽງທີ່ບໍ່ສຸພາບ.
- ປະຕິບັດຕໍ່ສະມາຊິກຂອງຊຸມຊົນໂຮງຮຽນ ແບບແຕກຕ່າງເນື່ອງມາຈາກລັກສນະຕ່າງໆເຊັ່ນສາສນາ ແລະ ຄວາມພິການຂອງພວກເຂົາ.
- ການສື່ສານທີ່ບໍ່ເໝາະສົມແລະເສັຍເວລາ.

ຮ່ວມມືກັນ.
ສະແດງຄວາມເຄົາຣົບ.
ການສື່ສານ.